# ກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ
# ເຫັນແຈ້ງມູນເຊື້ອດຸໝັ້ນ-ອາດຫານຂອງກຳລັງ ປ.ກ.ສ ລາວ



ໃນໂອກາດວັນສ້າງຕັ້ງສະຫະພັນກຳມະບານລາວຄົບຮອບ 56 ປີ (1/2/1956-1/2/2012) ຄະນະກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງການເຄື່ອນໄຫວສຶກສາຄົ້ນຄວ້າມູນເຊື້ອດຸໝັ້ນ ແລະ ອາດຫານຂອງກຳລັງປ້ອງກັນຄວາມສະຫງົບສຸກປະຊາຊົນລາວທີ່ຫໍວາງສະແດງມູນເຊື້ອກຳລັງປ້ອງກັນຄວາມສະຫງົບ ໂດຍການນຳພາຂອງສະຫາຍ ອາລຸນ ບຸນຍົງ ປະທານຄະນະກຳມະການຮາກຖານທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ແລະ ສະມາຊິກກຳມະບານ.

ໃນໂອກາດດັ່ງກ່າວ ບັນດາພິທີກອນຂອງຫໍວາງສະແດງມູນເຊື້ອກຳລັງປ້ອງກັນຄວາມສະຫງົບຕ່າງກໍຍົກໃຫ້ເຫັນທາດແທ້ມູນເຊື້ອອັນສະຫງ່າງາມຂອງກຳລັງ ປ.ກ.ສ ລາວ ເຊິ່ງໄດ້ຜ່ານຜ່າບົນເສັ້ນທາງອັນລະອິດ-ລະອ້ຽວ,ຊ້ຽວຂາດ ແລະ ຍາວນານທັງເຮັດວຽກງານສູ້ຮົບ ທັງເຮັດໜ້າທີ່ປ້ອງກັນການນຳ-ປ້ອງກັນພາຍໃນ ແລະ ຍາດເວລາເພີ່ມພູນຜະລິດຜົນ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ມີຫຼາຍກົມກອງໄດ້ກາຍເປັນຕົວແບບໃນການຜະລິດ, ການລ້ຽງສັດ, ແລະ ການ

ເຮັດໜ້າທີ່ ແລະ ປະຈຸບັນນີ້ກຳລັງປ້ອງກັນຄວາມສະຫງົບປະຊາຊົນຍັງມີພາລະໜ້າທີ່ອັນໃຫຍ່ຫຼວງທີ່ພັກ ແລະ ປະຊາຊົນມອບໝາຍໃຫ້ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຄວາມຜາສຸກ-ຄວາມສະຫງົບຄວາມຢູ່ເຢັນເປັນສຸກແກ່ປະຊາຊົນບັນດາເຜົ່າກໍຄືປົກປັກຮັກສາຄວາມສະຫງົບປອດໄພໃຫ້ແກ່ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສາກົນຕະຫຼອດເຖິງຊາວຕ່າງດ້າວທີ່ດຳລົງຊີວິດຢູ່ໃນ ສປປ ລາວ.

ໃນການທັດສະນະສຶກສາຂອງຄະນະນຳ ແລະ ສະມາຊິກກຳມະບານຮາກຖານທະນາຄານໃນຄັ້ງນີ້ສາມາດຖອດຖອນໄດ້ບົດຮຽນອັນລ້ຳຄ່າ ແລະ ເຫັນແຈ້ງຕໍ່ຜົນງານ ແລະ ໄຊຊະນະຂອງນາຍ ແລະ ພົນຕຳຫຼວດໂດຍສະເພາະແມ່ນຖອດຖອນໄດ້ບົດຮຽນແຫ່ງການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໂດຍສະເພາະອົງການຈັດຕັ້ງກຳມະບານຂອງກະຊວງປ້ອງກັນຄວາມສະຫງົບ.